ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ: ກ້າແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ບໍລິສັດ ປິໂຕຣລ້ຽມ ເທຣດດິ້ງລາວ ມະຫາຊົນ ຮັບລາງວັນຊົ້ງກຽດ ຈາກງານ International Finance Award 2024



ກຸງເທບ ປະເທດໄທ 21 ກຸມພາ 2025 (Bangkok, 21 Feb 2025).

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ໄດ້ຖືກຮັບຮອງໃຫ້ເປັນຜູ້ທີ່ໄດ້ຮັບ 2 ລາງວັນອັນຊົ້ງກຽດໃນເວທີ ງານ International Finance Award 2024 ຈາກສະຖາບັນ International Finance Magazine ຂອງ ປະເທດອັງກິດ ໃນສາຂາ **“ເຄືອຂ່າຍປ້ຳນ້ຳມັນຂາຍຍ່ອຍດີທີ່ສຸດ”** ແລະ ສາຂາ **“ຜູ້ອຳນວຍການໃຫຍ່ດີເດັ່ນດ້ານການສະໜອງນ້ຳມັນເຊື້ອໄຟ”** ປະຈຳປີ 2024 ໂດຍຈັດໃຫ້ມີພິທີມອບລາງວັນທີ່ ກຸງເທບ (ປະເທດໄທ) ໃນ ວັນທີ 21 ກຸມພາ 2025 ທີ່ຜ່ານມາ.

Petroleum Trading Lao Public Company Limited has been awarded two prestigious accolades at the International Finance Awards 2024 by International Finance Magazine of the United Kingdom: the **'Best Fuel Station Network'** award and the **'Best Retail Chief Executive Officer – Fuel Distribution'** award for Laos 2024. The awards ceremony was held in Bangkok, Thailand, on February 21, 2024.

ລາງວັນອັນຊົ້ງກຽດທັງສອງດັ່ງກ່າວນັ້ນແມ່ນໄດ້ຮັບ ຈາກການພິຈາລະນາ ຈາກການສະໜອງນ້ຳມັນເຊື້ອໄຟ ໃຫ້ ແກ່ສັງຄົມຢ່າງເປັນປົກກະຕິ ແລະ ຄວາມພ້ອມໃນການໃຫ້ບໍລິການນ້ຳມັນໃນໄລຍະທີ່ຜ່ານມາຂອງ ປິໂຕຣເທຣດ ບໍ່ວ່າຈະ ເປັນທາງດ້ານພາບລັກ, ການບໍລິການ, ຄວາມສະໜ່ຳສະເໝີ ແລະ ຄວາມເຊື່ອໝັ່ນຂອງຜູ້ຊົມໃຊ້ບໍລິການ ຜ່ານມາຢ່າງຍາວ

ນາມ, ໂດຍສະເພາະໃນຊ່ວງວິກິດການຂາດເຂີນນ້ຳມັນຄັ້ງປະຫວັດສາດຂອງປະເທດລາວ ໃນກາງປີ 2022 ແລະ ຕົ້ນປີ 2023 ທີ່ສະຖານີບໍລິການນ້ຳມັນ ພລັສ ທີ່ຍັງຄົງເປີດໃຫ້ບໍລິການແກ່ສັງຄົມຢ່າງເດັດດ່ຽວ ເຖິງແມ່ນຈະມີຄວາມຂາດເຂີນໃນການສະໜອງນ້ຳມັນເຊື້ອໄຟຈາກຜູ້ສະໜອງຕ່າງປະເທດທີ່ໜ້ອຍ ແລະ ບໍ່ພຽງພໍ, ແຕ່ ປີໂຕຣເທຣດ ຍັງຄົງສະໜອງນ້ຳມັນໃຫ້ແກ່ຜູ້ຊົມໃຊ້ດ້ວຍດີສະເໝີມາ.

The two prestigious awards were presented in consideration of Petrotrade's commitment to regular fuel supply and its proven reliability in providing fuel services. This reliability has been demonstrated through consistent appearance, service quality, and the earned trust of customers over time. In particular, during the severe fuel shortage crisis in Laos in mid-2022 and early 2023, Plus Gas Station part of Petrotrade's network, stood out as the only station that remained steadfastly open to serve consumers, even with limited supplies from foreign suppliers. Petrotrade successfully maintained fuel availability at its service stations throughout this challenging period.




ທ່ານ ຄຳສອນ ສິດທິໄຊ, ຮອງຜູ້ອຳນວຍການໃຫຍ່ ແລະ ທ່ານ ຄຳພຸດ ສົມບຸນ, ຮອງຜູ້ອຳນວຍການຝ່າຍການຄ້າ ຕາງໜ້າ ຂຶ້ນຮັບລາງວັນໃນພິທີ.


Mr. Khamsone SITTHIXAY, Deputy CEO & Mr. Khamphout Somboun, Deputy Director of Commercail receiving awards at the ceremony.

ການໄດ້ຮັບລາງວັນອັນຊົງກຽດທັງສອງລາງວັນທີ່ໄດ້ຮັບມານີ້ ເປັນການຢັ້ງຢືນໃຫ້ເຫັນເຖິງ ຄວາມເຊື່ອໝັ່ນ ແລະ ຄວາມໄວ້ວາງ ໃຈຂອງຜູ້ຊົມໃຊ້ການບໍລິການ ກໍ່ຄືຈາກທາງພັກລັດ ລວມໄປເຖິງການຍອມຮັບທັງພາຍໃນ ແລະ ຕ່າງປະ

ເທດຂອງ ບໍລິສັດ ປິໂຕຣລ້ຽມ ເທຣດດິ້ງລາວ ມະຫາຊົນ, ໃຫ້ຄຳໝັ້ນສັນຍາວ່າ ຈະຍັງຄົງສືບຕໍ່ພາລະກິດໃນການເປັນຜູ້ ສະໜອງນ້ຳມັນເຊື້ອໄຟທີ່ມີຄຸນນະພາບ ທັງການບໍລິຫານ ແລະ ການບໍລິການໃຫ້ແກ່ສັງຄົມດີຍິ່ງຂຶ້ນໄປ.

These two prestigious awards are a testament to the trust and confidence placed in our services by customers, the government, and the domestic and international community. Petroleum Trading Lao Public Company Limited is committed to continuing its mission of providing the highest quality fuel and services, and to serving society with excellence.





About International Finance Awards

International Finance aims to be a source of information, analysis and insights for the global finance community. Headquartered in London, IFM was established with a mission to convey credible financial news and articles to the global financial community in a concise, simple and easy-to-understand manner.

Integrating deep domain knowledge with sharp analysis, IFM is an online resource that helps readers understand the forces that drive the market better. Timely, in-depth and insightful coverage of key market developments and analysis of the drivers behind change help readers understand the complicated economic processes taking place in the international financial community.

You can visit website for further details http://awards.internationalfinance.com